**ໂຮງຮຽນ LOWELL PUBLIC SCHOOLS**
Henry J. Mroz Central Administration Offices
(ສຳນັກງານບໍລິຫານສ່ວນກາງ Henry J. Mroz)
155 Merrimack Street
Lowell, MA 01852

ວັນທີ 11 ທັນວາ 2020

ເຖິງບັນດາຄອບຄົວຂອງນັກຮຽນປະຈຳໂຮງຮຽນ Lowell Public Schools,

ຂ້າພະເຈົ້າຫວັງວ່າທຸກໆຄົນຄົງປອດໄພ ແລະ ສະບາຍດີໃນຊ່ວງເວລາອັນຍາກລຳບາກເຊັ່ນນີ້. ຕັ້ງແຕ່ວັນທີ 19 ຕຸລາ ເປັນຕົ້ນມາ, ນັກຮຽນ 97% ຂອງພວກເຮົາໄດ້ເຂົ້າຮ່ວມການຮຽນການສອນແບບທາງໄກ ເນື່ອງຈາກມີອັດຕາການແຜ່ລະບາດຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ເພີ່ມສູງຂຶ້ນໃນເມືອງ Lowell ແຫ່ງນີ້. ໃນຂະນະດຽວກັນ, ເປີເຊັນຈຳນວນໜ້ອຍຂອງນັກຮຽນໃນຊັ້ນຮຽນການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງຂອງພວກເຮົາຍັງຄົງສາມາດເລືອກທີ່ຈະເຂົ້າຮ່ວມການຮຽນການສອນພາຍໃນໂຮງຮຽນ ແລະ ພາຍໃນຫ້ອງຮຽນຕັ້ງແຕ່ມື້ທຳອິດຂອງການເຂົ້າຮຽນ. ຈາກວິກິດການດ້ານສຸຂະພາບທີ່ບໍ່ເຄີຍເກີດຂຶ້ນມາກ່ອນເຊັ່ນນີ້, ພວກເຮົາໄດ້ຖືເອົານັກຮຽນທີ່ຕ້ອງການຄວາມຊ່ວຍເຫຼືອທີ່ສຸດເປັນບຸລິມະສິດຫຼັກໃຫ້ໄດ້ຮັບການສຶກສາພາຍໃນໂຮງຮຽນ ເນື່ອງຈາກພວກເຂົາມີຄວາມຕ້ອງການອັນສະເພາະເຈາະຈົງຢ່າງຍິ່ງ ພ້ອມກັບລະດັບຂອງການໃຫ້ບໍລິການ ແລະ ການຮຽນການສອນທີ່ກ່ຽວຂ້ອງເຊິ່ງພວກເຂົາໄດ້ຮັບໃນແຕ່ລະວັນ.

ພວກເຮົາຍັງຄົງໝັ້ນໃຈໃນລະດັບຄວາມປອດໄພຂອງອາຄານຮຽນຂອງພວກເຮົາຕາມລະບຽບການອັນເຂັ້ມງວດທີ່ນຳໃຊ້, ແຕ່ວ່າການແຜ່ລະບາດຢ່າງກວ້າງຂວາງຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ໃນຊຸມຊົນ - ເຊິ່ງໄດ້ເພີ່ມຂຶ້ນເປັນຫຼາຍກວ່າ 100 ກໍລະນີ ຕໍ່ພົນລະເມືອງ 100,000 ຄົນຂອງເມືອງ Lowell ໃນອາທິດທີ່ຜ່ານມາ - ແມ່ນ ແລະ ຈະສືບຕໍ່ສົ່ງຜົນກະທົບຢ່າງຫຼວງຫຼາຍເພີ່ມຂຶ້ນຕໍ່ການຈັດສັນພະນັກງານ ແລະ ການທົດແທນພະນັກງານທີ່ສະດວກເຂົ້າມາເຮັດວຽກ ເນື່ອງຈາກການຕິດເຊື້ອ ແລະ ການກັກຕົວ. ໃນປະຈຸບັນ, ອັດຕາການແຜ່ລະບາດຂອງພະຍາດອັກເສບປອດ ໂຄວິດ-19 (COVID-19) ທົ່ວຊຸມຊົນ ແມ່ນຈະເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງໂປຣແກຣມການສິດສອນພາຍໃນຫ້ອງຮຽນຂອງພວກເຮົາຢ່າງຫຼີກຫຼ່ຽງບໍ່ໄດ້ໃນອີກບໍ່ພໍເທົ່າໃດມື້ຂ້າງໜ້າເນື່ອງຈາກພວກເຮົາຖືກບັງຄັບໃຫ້ກັກກັນຫ້ອງຮຽນ ແລະ ໂຮງຮຽນແຕ່ລະແຫ່ງ. ດັ່ງນັ້ນ, ເພື່ອແຈ້ງຂໍ້ມູນຕ່າງໆໃຫ້ຄອບຄົວຂອງນັກຮຽນຮັບຊາບໃຫ້ຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ພ້ອມທັງກຳຈັດເຫດການທີ່ອາດເກີດຂຶ້ນໄດ້ຈາກການປ່ຽນແປງຂອງໂມງເຂົ້າວຽກໃນຕອນກາງຄືນຕໍ່ການຮຽນການສອນຜ່ານຮູບແບບທາງໄກ (ເຊິ່ງບັງຄັບໃຊ້ໂດຍລະບຽບການກັກກັນພະຍາດຂອງພວກເຮົາ), **ໂປຣແກຣມການສຶກສາພິເສດທີ່ແຍກອອກຕ່າງຫາກຢ່າງສິ້ນເຊີງທັງໝົດນັ້ນ ເຊິ່ງປະຈຸບັນມີການດຳເນີນການຮຽນການສອນພາຍໃນໂຮງຮຽນ ແມ່ນຈະຍ້າຍໄປເປັນການສິດສອນແບບທາງໄກບາງມື້ໃນອາທິດຂອງການຮຽນການສອນໄປຈົນເຖິງພັກແລ້ງລະດູໜາວ, ໄດ້ແກ່:**

**ວັນຈັນທີ 21 ທັນວາ**
**ວັນອັງຄານທີ 22 ທັນວາ**
**ວັນພຸດທີ 23 ທັນວາ**

ນັກຮຽນເຫຼົ່ານີ້ຈະຍັງຄົງສືບຕໍ່ເຂົ້າຮຽນພາຍໃນຫ້ອງຮຽນໃນອາທິດທີ່ຈະມາເຖິງນີ້ຂອງຊ່ວງວັນທີ 14-18 ທັນວາ ແລະ ພວກເຮົາກໍມີການວາງແຜນທີ່ຈະອະນຸຍາດໃຫ້ນັກຮຽນເຫຼົ່ານີ້ກັບຄືນມາຮັບການສຶກສາພາຍໃນຫ້ອງຮຽນໂດຍໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ຫຼັງຈາກສິ້ນສຸດພັກແລ້ງລະດູໜາວ, ໂດຍມື້ທຳອິດຂອງການເປີດສົກຮຽນທີ່ກຳນົດໄວ້ໃນປະຈຸບັນແມ່ນ ວັນຈັນທີ 4 ມັງກອນ.

ພວກເຮົາເຫັນຄຸນຄ່າຂອງຜົນກະທົບທີ່ການຕັດສິນໃຈອັນຍາກລຳບາກເຫຼົ່ານີ້ມີຕໍ່ນັກຮຽນ ແລະ ຄອບຄົວຂອງພວກເຂົາ, ສະນັ້ນຈົດໝາຍສະບັບນີ້ຈຶ່ງມີຈຸດປະສົງເພື່ອແຈ້ງຂໍ້ມູນໃຫ້ຮັບຊາບກ່ອນລ່ວງໜ້າຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ເພື່ອຊ່ວຍໃຫ້ຄອບຄົວວາງແຜນສຳລັບ ສາມ (3) ມື້ເຫຼົ່ານີ້ໃນການເຂົ້າຮັບການສຶກສາແບບທາງໄກ ເຊິ່ງໄດ້ລະບຸໄວ້ຂ້າງເທິງ.

ສ່ວນບັນດານັກຮຽນທີ່ເຫຼືອຂອງພວກເຮົາທີ່ເຂົ້າຮັບການສຶກສາຜ່ານຮູບແບບທາງໄກ, ພວກເຮົາຈະຍັງຄົງສືບຕໍ່ປະຕິບັດຕາມແຜນການຮຽນການສອນແບບທາງໄກໃນປະຈຸບັນຈົນກວ່າຈະມີແຈ້ງການໃຫ້ຮັບຊາບຕໍ່ໄປ. ເຊິ່ງພວກເຮົາກໍມີການວາງແຜນທີ່ຈະແຈ້ງຂໍ້ມູນອັບເດດໃຫ້ແກ່ຄອບຄົວຂອງນັກຮຽນຮັບຊາບກ່ອນພັກແລ້ງລະດູໜາວ.

ຂໍຂອບໃຈອີກຄັ້ງສໍາລັບການໃຫ້ຄວາມຮ່ວມມື ແລະ ການປັບຕົວທີ່ຍັງຄົງດໍາເນີນຕໍ່ໄປຂອງທ່ານໃນຂະນະທີ່ພວກເຮົາດໍາເນີນງານເພື່ອຮັບປະກັນຄວາມປອດໄພໃຫ້ແກ່ບັນດານັກຮຽນ, ຄອບຄົວຂອງພວກເຂົາ ແລະ ເຈົ້າໜ້າທີ່ຂອງພວກເຮົາໃນຊ່ວງເວລາທີ່ຍາກລໍາບາກ ແລະ ບໍ່ມີຄວາມແນ່ນອນເຊັ່ນນີ້.

ດ້ວຍຄວາມນັບຖື ແລະ ຮັກແພງ,



Dr. Joel D. Boyd
Superintendent of Schools (ຜູ້ບໍລິຫານໂຮງຮຽນ)